## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 14 ກໍຣະກະດາ 2024 (07-14-2024)

---

## ຄໍາສັນຍາຂອງພຣະເຈົ້າກ່ຽວກັບພັນທະສັນຍາໃໝ່

**ຈຸດສໍາຄັນໃນບົດຮຽນ:** ພຣະເຈົ້າໄດ້ສັນຍາວ່າມີຊີວິດນິລັນດອນຢູ່ໃນພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ອັນໃໝ່ແມ່ນດີກວ່າອັນເກົ່າ-ຍົກເວັ້ນກະແລັມແບບບູຮານ! ພວກເຮົາອາດຈະຂໍາຂັນກັບຄໍາເວົ້າແບບນັ້ນ, ແຕ່ຄວາມຈິງແລ້ວພວກເຮົາສ່ວນໃຫ່ຽຂ້ອນຂ້າງມັກບາງຢ່າງທີ່ໃໝ່ເໜືອບາງຢ່າງທີ່ເກົ່າ: **(1)** ພວກເຮົາມັກຂັບຣົດໃໝ່ກວ່າຂັບລົດເກົ່າ. **(2)** ພວກເຮົາມັກຢູ່ອາສັຍໃນເຮືອນໃໝ່ແທນທີ່ຈະຢູ່ໃນເຮືອນເກົ່າ. **(3)** ພວກເຮົາມັກນຸ່ງເຄື່ອງໃໝ່ເພື່ອປະຖິ້ມເຄື່ອງເກົ່າ. **(4)** ພວກເຮົາມັກຊົງຜົມລຸ້ນຫຼ້າສຸດຕໍ່ສອງປີກ່ອນ. ຢ່າງໃດກໍ່ຕາມ, ຄວາມໃໝ່ຈະໝົດໄປຢ່າງໄວວາ. ຣົດໃໝ່ເສັຽກິ່ນຂອງຣົດໃໝ່ແລະກ່ອນທີ່ພວກເຮົາຈະຮູ້, ຣົດມີຮອຍຂີດອັນນຶ່ງຫຼືສອງອັນ, ເຄື່ອງນຸ່ງໃໝ່ກາຍເປັນແຟຊັນຂອງປີກາຍນີ້, ແລະຊົງຜົມກໍກັບມາແລະຜ່ານໄປ. ແທ້ຈິງແລ້ວ, ສອງສາມປີຜ່ານມາ, ເມື່ອເຮົາເບິ່ງຮູບເກົ່າ, ພວກເຮົາບໍ່ອາດສາມາດເຊື່ອໄດ້ວ່າພວກເຮົາຈະນຸ່ງເຄື່ອງແບບນັ້ນຫຼືຈັ່ງຊົງຜົມແບບນັ້ນ! ຢ່າງໃດກໍ່ຕາມ, ພຣະເຈົ້າໄດ້ໃຫ້ສັນຍາກັບພວກເຮົາບາງສິ່ງບາງຢ່າງໃໝ່ທີ່ຈະຄົງຢູ່ຕລອດໄປ; ຄວາມສັມພັນອັນບໍ່ຢຸດຢັ້ງກັບພຣະອົງທີ່ເລີ້ມຕົ້ນເມື່ອພວກເຮົາເຊື່ອສັດທາໃນພຣະເຢຊູຄຣິດ. ແຟຊັນແລະຂບວນການຈະຜ່ານໄປແລະກັບມາ, ແຕ່ຊີວິດໃໝ່ທີ່ພຣະເຈົ້າມອບໃຫ້ພວກເຮົາຈະບໍ່ມີວັນຫາຍໄປ. ຊີວິດອັນຄົບບໍຣິບູນທີ່ພຣະເຢຊູມອບໃຫ້ເຮົາເລີ້ມຕົ້ນຂຶ້ນເມື່ອພວກເຮົາເລືອກທີ່ຈະໄວ້ວາງໃຈໃນພຣະອົງ (ຢຮ. 10:10).

*ເມື່ອໃດທີ່ເປັນຄັ້ງສຸດທ້າຍທີ່ທ່ານມີຄວາມຕື່ນເຕັ້ນກັບສິ່ງໃໝ່ໆ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ເຢເຣມີຢາ 31:31-32

*31. ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເມື່ອວັນເວລານັ້ນມາເຖິງ ເຮົາຈະໃຫ້ຄໍາໝັ້ນສັນຍາໃໝ່ແກ່ປະຊາຊົນອິສຣາເອນ ແລະຢູດາ. 32. ຄໍາໝັ້ນສັນຍານີ້ຈະບໍ່ເໝືອນທີ່ເຮົາໄດ້ໃຫ້ບັນພະບູລຸດຂອງພວກເຂົາຕອນຈູງມືເຂົາອອກຈາກເອຢິບນັ້ນ ເຖິງແມ່ນເຮົາເປັນພຣະຜູ້ເປັນເຈົ້າຂອງເຂົາ ພວກເຂົາກໍບໍ່ສັດຊື່ຕໍ່ຄໍາໝັ້ນສັນຍາທີ່ເຮົາໄດ້ໃຫ້ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.*

ຜູ້ແປພາສາໃນພຣະຄັມພີມັກເອີ້ນເຢເຣມີຢາບົດ 30-33 ວ່າ "ໜັງສືແຫ່ງການປອບໂຍນ" ຫຼື "ໜັງສືແຫ່ງການປອບໃຈ." ເຢເຣມີຢາເປັນຜູ້ປະກາດພຣະທັມໃນລະຍະຍຸກສຸດທ້າຍຂອງອານາຈັກພາກໃຕ້ຄືຢູດາ, ລາວໄດ້ເຕືອນໄພ່ພົນຂອງພຣະເຈົ້າສໍາລັບການຫັນໜີຈາກພັນທະສັນຍາຂອງພຣະເຈົ້າ, ແລະເຕືອນພວກເຂົາວ່າພວກເຂົາບໍ່ໄດ້ກັບໃຈ, ພວກເຂົາໄດ້ມຸ້ງໜ້າໄປເປັນຊະເລີຍໃນບາບີໂລນ. ແຕ່ໜ້າເສັຽດາຍ, ປະຊາຊົນຂອງພຣະເຈົ້າບໍ່ຫັນຄືນກັບໄປຫາພຣະອົງ, ດັ່ງນັ້ນພຣະອົງຈຶ່ງໄດ້ເອົາກອງທັບຂອງກະສັດເນບູກາດເນັດຊາແຫ່ງບາບີໂລນມາຕໍ່ສູ້ຢູດາ. ຊາວບາບີໂລນໄດ້ເອົາຊະນະຢູດາແລະໄດ້ທໍາລາຍພຣະວິຫານໃນເຢຣູຊາເລັມ (ເຢເຣມີຢາ 39). ມັນເປັນເວລາທີ່ມືດມົວທີ່ສຸດໃນປວັດສາດພຣະສັນຍາເດີມ. ເຖິງແນວໃດກໍ່ຕາມ, ເຢເຣມີຢາຍັງປະກາດວ່າການຊະນະຢູດາບໍ່ແມ່ນການພ່າຍແພ້ຂອງພຣະເຈົ້າ! ຈຸດປະສົງຂອງພຣະເຈົ້າຈະກ້າວໄປຂ້າງໜ້າ, ແລະພຣະອົງຍັງມີແຜນການທີ່ດີສໍາລັບໄພ່ພົນຂອງພຣະອົງ. ຜູ້ປະກາດພຣະທັມໄດ້ປະກາດພັນທະສັນຍາໃໝ່ທີ່ພຣະເຈົ້າຈະສ້າງຂຶ້ນກັບໄພ່ພົນຂອງພຣະອົງ. ພັນທະສັນຍາໃໝ່ນີ້ບໍ່ຄືກັບພັນທະສັນຍາທີ່ຜ່ານມາ, ແຕ່ມັນຖືກສ້າງຂຶ້ນເທິງພື້ນຖານພັນທະສັນຍາເດີມ. ທີ່ເປັນໜ້າສົນໃຈ, ເຢເຣມີຢາໄດ້ປະກາດວ່າພຣະເຈົ້າຈະເຮັດໃຫ້ພັນ

ທະສັນຍາໃໝ່ນີ້ "ກັບຄອບຄົວຂອງອິສຣາເອນແລະກັບຄອບຄົວຢູດາ" (ເຢເຣມີຢາ 31:31). ການປົກຄອງຂອງກະສັດຊາວອິສຣາເອນສາມຄົນທຳອິດ-ຊາອູນ, ດາວິດ, ແລະໂຊໂລໂມນ-ອິສຣາເອນເປັນນຶ່ງດຽວກັນຢູ່ພາຍໃຕ້ບັນດາກະສັດເຫຼົ່ານີ້. ຢ່າງໃດກໍ່ຕາມ, ຫຼັງຈາກການເສັຽຊີວິດຂອງໂຊໂລໂມນໃນປີ 930 ກ່ອນຄ.ສ. ອານາຈັກຖືກແບ່ງອອກເປັນສອງພາກ. ອານາຈັກພາກເໜືອໄດ້ສືບຕໍ່ໃຊ້ຊື່ວ່າ ອິສຣາເອນ, ໃນຂນະທີ່ອານາຈັກພາກໃຕ້ໄດ້ໃຊ້ຊື່ວ່າຢູດາ. ອິສຣາເອນໄດ້ເຮັດບາບຕໍ່ສູ້ພຣະເຈົ້າໄດ້ຮັບການພິພາກສາຂອງພຣະເຈົ້າຢູ່ໃນມືຂອງອັດຊີເຣັຽໃນປີ 721 ກ່ອນຄ.ສ. ຢູດາຍັງຄົງຢູ່ອີກ 135 ປີກ່ອນທີ່ຈະຕົກຢູ່ກັບບາບີໂລນໃນປີ 586 ກ່ອນຄ.ສ. ແຕ່ການປະຖິ້ມການແບ່ງແຍກປວັດສາດນີ້, ເຢເຣມີຢາໄດ້ປະກາດພຣະສັນຍາໃໝ່ທີ່ພຣະເຈົ້າຈະນຳເອົາປະຊາຊົນຂອງພຣະອົງຈາກອິສຣາເອນແລະຢູດາກັບຄືນມາເປັນປະເທດດຽວ! ຜູ້ປະກາດພຣະທັມໄດ້ເນັ້ນໜັກວ່າຂໍ້ຄວາມທີ່ລາວນຳມາແມ່ນມາຈາກພຣະເຈົ້າໂດຍກົງ. ບໍ່ໄດ້ສື່ສານຄວາມປາຖນາຂອງຕົນເອງວ່າລາວຫັວງວ່າພຣະເຈົ້າຈະເຮັດໃນມື້ນຶ່ງ. ພຣະເຈົ້າໄດ້ສັນຍາທີ່ບໍ່ມີກຳນົດເວລາແນ່ນອນວ່າພັນທະສັນຍາໃໝ່ນີ້ຈະມາ! ພັນທະສັນຍາໃໝ່ນີ້ຈະແຕກຕ່າງກັນຢ່າງຫຼວງຫຼາຍຈາກພັນທະສັນຍາທີ່ພຣະເຈົ້າໄດ້ເຮັດກັບໂມເຊແລະປະຊາຊົນໃນເວລາທີ່ພຣະອົງໄດ້ນຳເອົາພວກເຂົາອອກມາຈາກປະເທດອີຢິບ(ຂໍ້ 32). ປະຊາຊົນໄດ້ເດີນທາງຈາກປະເທດອີຢິບໄປເຖິງພູເຂົາຊີນາຍ, ຢູ່ທີ່ນັ້ນ, ພຣະເຈົ້າໄດ້ສື່ສານຄຳສັ່ງຂອງພຣະອົງກັບໂມເຊແລະປະຊາຊົນໄດ້ຕົກລົງທີ່ຈະປະຕິບັດຕາມ (ອົບພະຍົບ 19: 1-8). ຜູ້ຄົນໄດ້ຝ່າຝືນພັນທະສັນຍາຊີນາຍຂອງພຣະເຈົ້າເທື່ອແລ້ວເທື່ອເຫຼົ່າ, ເຖິງແມ່ນວ່າພຣະເຈົ້າຈະສັດຊື່ກໍ່ຕາມ. ເຖິງຢ່າງໃດກໍ່ຕາມ, ຈຸດປະສົງຂອງພຣະເຈົ້າຈະກ້າວໄປຂ້າງໜ້າ, ແລະພຣະອົງຈະຕັ້ງພັນທະສັນຍາໃໝ່ບໍ່ເໝືອນພັນທະສັນຍາເດີມທີ່ຜ່ານມາ.

### 2. ເຢເຣມີຢາ 31:33-34

*33. ເມື່ອເວລານັ້ນມາເຖິງ ເຮົາຈະໃຫ້ຄຳໝັ້ນສັນຍາແກ່ປະຊາຊົນອິສຣາເອນດັ່ງນີ້ ຄືຈະບັນຈຸພຣະທັມຂອງເຮົາໄວ້ໃນຈິດໃຈຂອງພວກເຂົາ ເຮົາຈະເປັນພຣະເຈົ້າຂອງເຂົາ ແລະພວກເຂົາຈະເປັນໄພ່ພົນຂອງເຮົາ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫຼະ. 34. ຕໍ່ໄປຈະບໍ່ມີຜູ້ໃດໃນພວກເຂົາສອນເພື່ອນບ້ານ ແລະພີ່ນ້ອງຂອງຕົນວ່າ ຈົ່ງຮູ້ຈັກພຣະຜູ້ເປັນເຈົ້າເພາະວ່າພວກເຂົາທັງໝົດຕັ້ງແຕ່ຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດຈະຮູ້ຈັກເຮົາ ເຮົາຈະໃຫ້ອະພັຍບາບແກ່ເຂົາ ແລະຈະບໍ່ຈົດຈຳຄວາມຜິດຂອງເຂົາອີກຕໍ່ໄປ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫຼະ."*

ເຢເຣມີຢາໄດ້ກ່າວເຖິງຄວາມລົ້ມເຫຼວຂອງປະຊາຊົນໃນການດຳເນີນຊີວິດຕາມພັນທະສັນຍາເດີມ(ຂໍ້ 33): ໃນປະຈຸບັນພຣະອົງໄດ້ໃຫ້ເຫັນເຖິງວິທີການໃໝ່ຂອງພັນທະສັນຍາຂອງພຣະອົງຈະສ້າງຄວາມສັມພັນຂອງປະຊາຊົນຂອງພຣະອົງກັບພຣະອົງ. ໃຫ້ສັງເກດເວລານີ້, ເຢເຣມີຢາໄດ້ກ່າວເຖິງຄຳສັນຍານວ່າພຽງແຕ່ "ກັບຄອບຄົວຂອງອິສຣາເອນ"(**ຂໍ້** 33), ແທນທີຈະ, "ກັບຄອບຄົວອິສຣາເອນແລະກັບຄອບຄົວຢູດາ" ດັ່ງທີ່ລາວເວົ້າຢູ່ໃນຂໍ້ທີ **31**. ອີກເທື່ອນຶ່ງ. ລາວໄດ້ເນັ້ນໜັກເຖິງຄວາມສາມັກຄີທີ່ຄຳສັນຍາໃໝ່ຂອງພຣະເຈົ້າຈະນຳເອົາ. ພຣະເຈົ້າໄດ້ປະກາດກຸນແຈທີ່ສຳຄັນສີ່ຢ່າງຂອງພັນທະສັນຍາໃໝ່:

- ພຣະອົງຈະໃຫ້ຄຳສອນຂອງພຣະອົງຢູ່ໃນປະຊາຊົນຂອງພຣະອົງ.
- ພຣະອົງຈະຂຽນມັນໃສ່ໄວ້ໃນຫົວໃຈປະຊາຊົນຂອງພຣອົງ.
- ພຣະອົງຈະເປັນພຣະເຈົ້າຂອງພວກເຂົາ.
- ພວກເຂົາຈະເປັນໄພ່ພົນຂອງພຣະອົງ.

ໃນພຣະຄັມພີໃໝ່, ອັຄສາວົກໂປໂລໄດ້ເນັ້ນໜັກໃຫ້ເຫັນວ່າມີຈຳນວນປະຊາຊົນຫຼາຍປານໃດທີ່ຢູ່ໃນພຣະຄັມພີເດີມໄດ້ດຳເນີນຊີວິດຢູ່ຄືວ່າຄຳສັ່ງຂອງພຣະເຈົ້າເປັນພຽງພາຍນອກໃນບາງສິ່ງບາງຢ່າງສຳລັບພວກເຂົາ. ນັ້ນແມ່ນ, ມັນຖືກຂຽນໄວ້ໃນແຜ່ນຫີນເທົ່ານັ້ນ, ແທນທີ່ຈະຢູ່ໃນຈິດໃຈຂອງປະຊາຊົນ (2 ໂກຣິນໂທ 3:7-8). ແນວໃດກໍ່ຕາມ, ພັນທະສັນຍາໃໝ່ຂອງພຣະເຈົ້າໄດ້ເນັ້ນໜັກເຖິງຄວາມກ່ຽວຂ້ອງພາຍໃນຂອງການສິດສອນຂອງພຣະເຈົ້າ. ຫຼາຍຄົນທີ່ເຕີບໂຕໃຫ່ຍຂຶ້ນໃນຄອບຄົວຄຣິສະຕຽນທຳອິດແມ່ນໄດ້ຮຽນເຣື່ອງຂອງ ພຣະເຈົ້າຈາກພໍ່ແມ່. ພໍ່ແມຂອງເຂົາເຈົ້າສັ່ງສອນພວກເຂົາໃນທາງຂອງພຣະເຈົ້າ, ແລະເດັກນ້ອຍໄດ້ເຫັນວ່າພໍ່ແມ່ດຳເນີນຊີວິດຕາມ**ຄວາມ**

ເຊື່ອຂອງພວກເຂົາ. ຢ່າງໃດກໍ່ຕາມ, ເດັກນ້ອຍຈະມີຄວາມຮັບຜິດຊອບໃນມື້ນຶ່ງທີ່ຈະເຊື່ອວາງໃຈໃນພຣະເຢຊູຄຣິດດ້ວຍສ່ວນຕົວຂອງພວກເຂົາເອງ. ມັນຕ້ອງກາຍເປັນສິ່ງທີ່ເກີດຂຶ້ນຢູ່ພາຍໃນຕົວຂອງພວກເຂົາເອງເຊັ່ນກັນ, ບໍ່ແມ່ນຈະເປັນແຕ່ພຽງພວກເຂົາເຫັນພໍ່ແມ່ປະຕິບັດເທົ່ານັ້ນ. ຖ້ອຍຄຳທີ່ວ່າ, "ເຮົາຈະເປັນພຣະເຈົ້າຂອງພວກເຂົາແລະພວກເຂົາຈະເປັນປະຊາຊົນຂອງເຮົາ" (ເຢເຣມີຢາ 31:33), ໄດ້ເນັ້ນໜັກເຖິງຄວາມສຳພັນສ່ວນຕົວທີ່ພຣະເຈົ້າຊົງມີກັບປະຊາຊົນຂອງພຣະອົງໃນສມັຍນັ້ນ. ພວກເຂົາຈະຕິດຕາມພຣະອົງຢ່າງສັດຊື່ຫຼາຍຂຶ້ນເພາະວ່າພຣະເຈົ້າໄດ້ຂຽນຖ້ອຍຄຳຂອງພຣະອົງໃສ່ໄວ້ໃນຈິດໃຈຂອງພວກເຂົາ, ພຣະຄັມຂອງພຣະອົງຈະເປັນສ່ວນນຶ່ງຂອງຊີວິດຂອງພວກເຂົາ, ແລະພຣະຄັມຂອງພຣະອົງຈະເປັນເໝືອນນ້ຳພຸໄຫຼອອກຈາກຊີວິດຂອງພວກເຂົາ, ນີ້ແມ່ນບາງວິທີທີ່ພວກເຮົາສາມາດປັບປຸງໃຫ້ດີຂຶ້ນທາງພາຍໃນພຣະຄັມແລະຄຳສັ່ງຂອງພຣະເຈົ້າ. ບາງທີທ່ານອາດຄິດເຖິງຄົນອື່ນ.

- ການອ່ານພຣະຄັມພີເປັນປະຈຳ.
- ການໃຊ້ເວລາໃນການອະທິຖານ.
- ການເຂົ້າຮ່ວມກຸ່ມກັນກັບຜູ້ເຊື່ອຄົນອື່ນຢ່າງຕໍ່ເນື່ອງ (ການສາມັກຄີທັມ), ທັງໃນການນະມັສການຮວມແລະການຕັ້ງກຸ່ມນ້ອຍ.

ເຢເຣມີຢາໄດ້ເນັ້ນອີກເທື່ອນຶ່ງວ່າພັນທະສັນຍາໃໝ່ຂອງພຣະເຈົ້າຈະປ່ຽນວິທີທີ່ລູກໆຂອງພຣະອົງມີຊີວິດຢູ່ໃນຄວາມສຳພັນກັບພຣະອົງແນວໃດ. ພັນທະສັນຍາໃໝ່ຈະມີຄວາມຮູ້ສ່ວນຕົວກ່ຽວກັບພຣະເຈົ້າໂດຍທຸກຄົນທີ່ຢູ່ໃນນັ້ນ! ການຍຶດໝັ້ນຕໍ່ພັນທະສັນຍາຂອງພຣະເຈົ້າແມ່ນລວມເຖິງຄວາມສຳພັນສ່ວນຕົວກັບພຣະອົງ. ໃນທີ່ສຸດ, ພຣະເຈົ້າໄດ້ປະກາດວ່າ, "ເຮົາຈະໃຫ້ອະພັຍຄວາມຊົ່ວຊ້າຂອງພວກເຂົາແລະບໍ່ຈົດຈຳຄວາມບາບຂອງພວກເຂົາອີກ"(ຂໍ້ 34). ພາຍໃຕ້ພຣະສັນຍາໃໝ່, ເຮົາຈະມີຊີວິດຢູ່ໃນການໃຫ້ອະພັຍ, ມຸ່ງໝັ້ນຢ່າງເຕັມທີ່ຕໍ່ພຣະເຈົ້າດ້ວຍຫົວໃຈແລະຄວາມຄິດ. ຄຳສັບທີ່ແປວ່າ "ຈື່" ປະກອບດ້ວຍຄວາມສຳຄັນຂອງການປະຕິບັດກັບສິ່ງທີ່ຈື່ໄດ້. ໃນເວລາທີ່ພຣະເຈົ້າໄດ້ທຳລາຍຄົນຊົ່ວຮ້າຍໃນເມືອງໂຊໂດມແລະເມືອງໂກໂມຣາ, ພຣະອົງຈື່ຈຳຄວາມສຳພັນຂອງພຣະອົງກັບອັບຣາຮາມແລະດັ່ງນັ້ນຈຶ່ງໄດ້ຊ່ວຍໂລດຫຼານຊາຍຂອງອັບຣາຮາມໄວ້, ຈາກການທຳລາຍ (ປະຖົມມະການ 19:29). ຮັນນາໄດ້ປະສົບກັບການເປັນໝັນແຕ່ພຣະເຈົ້າຈື່ນາງແລະຄຳອະທິຖານຂອງນາງ, ແລະນາງກໍ່ຕັ້ງທ້ອງຜູ້ປະກາດພຣະທັມຊາມູເອນ(1 ຊາມູເອນ 1:19-20). ດັ່ງນັ້ນ, ພຣະຜູ້ເປັນເຈົ້າຈຶ່ງເນັ້ນໜັກວ່າພຣະອົງຈະບໍ່ຈື່ຈຳຄວາມບາບຂອງປະຊາຊົນຂອງພຣະອົງອີກຕໍ່ໄປ, ນັ້ນແມ່ນ, <u>ພຣະອົງຈະບໍ່ເອົາມັນເຂົ້າໄປໃນບັນຊີອີກ. ພັນທະສັນຍາໃໝ່ຈະມີການໃຫ້ອະພັຍຢ່າງສົມບູນ.</u>

## 3. ລູກາ 22:14-20

*14. ເມື່ອເຖິງໂມງມາແລ້ວພຣະອົງປະທັບຮ່ວມໂຕະກັບພວກອັຄສາວົກ. 15. ພຣະອົງຊົງກ່າວກັບເຂົາວ່າ, "ເຮົາມີຄວາມປາຖນາດ້ວຍເຕັມໃຈທີ່ຈະກິນປັສຄານີ້ກັບພວກທ່ານກ່ອນເຮົາຈະທົນທຸກທໍຣະມານ. 16. ດ້ວຍເຮົາບອກທ່ານທັງຫຼາຍວ່າ ເຮົາຈະບໍ່ກິນປັສຄານີ້ອີກຈັກເທື່ອຈົນກວ່າຈະສຳເລັດຄວາມໝາຍຂອງປັສຄານັ້ນໃນຣາຊແຜ່ນດິນຂອງພຣະເຈົ້າ." 17. ພຣະອົງຈັບເອົາຈອກ ໂມທະນາພຣະຄຸນແລ້ວຊົງກ່າວວ່າ, "ຈົ່ງຮັບເອົາຈອກນີ້ຢາຍໃຫ້ກັນດື່ມ. 18. ເພາະເຮົາບອກທ່ານທັງຫລາຍວ່າເຮົາຈະບໍ່ດື່ມນ້ຳພົນອະງຸ່ນນີ້ຕໍ່ໄປອີກຈົນກວ່າຣາຊອານາຈັກຂອງພຣະເຈົ້າຈະມາຕັ້ງຢູ່." 19. ພຣະອົງຊົງຈັບເຂົ້າຈີ່ມາໂມທະນາພຣະຄຸນແລ້ວຊົງຫັກເຂົ້າຈີ່ນັ້ນຍື່ນໃຫ້ແກ່ເຂົາໂດຍຊົງກ່າວວ່າ, "ນີ້ແຫລະ, ຄືກາຍຂອງເຮົາຊຶ່ງໄດ້ປະທານສຳລັບທ່ານທັງຫຼາຍ [ຈົ່ງເຮັດຢ່າງນີ້ໃຫ້ເປັນທີ່ລະນຶກເຖິງເຮົາ." 20. ເມື່ອຮັບປະທານເຂົ້າແລງແລ້ວຈຶ່ງຊົງຈັບເອົາຈອກມາຢ່າງດຽວກັນ ໂດຍຊົງກ່າວວ່າ, "ຈອກນີ້ເປັນຄຳສັນຍາໃໝ່ໃນເລືອດຂອງເຮົາທີ່ຖອກອອກສຳລັບທ່ານທັງຫລາຍ].*

ເຖິງເວລາແລ້ວທີ່ພຣະເຢຊູແລະສາວົກຂອງພຣະອົງຈະສລອງປັສຄາ. ງານເທສການປັສຄາຂອງຊາວຢິວເປັນການລະນຶກເຖິງການປົດປ່ອຍປະຊາຊົນຂອງພຣະອົງອອກຈາກຊາວເອຢິບ. ພຣະເຈົ້າໄດ້ຜ່ານດິນແດນເອຢິບແລະຂ້າລູກຫົວປີທັງໝົດ. ແນວໃດກໍ່ຕາມ ພຣະເຈົ້າໄດ້ແນະນຳຊາວອິສຣາເອນໃຫ້ເອົາເລືອດແກະທາໃສ່ຂອບປະຕູແລະບານປະຕູຂອງພວກເຂົາເຈົ້າ. ບ້ານທີ່ມີເລືອດຂອງແກະຢູ່ຂອບວົງປະຕູຈະຖືກຍົກເວັ້ນການພິພາກສາຂອງພຣະເຈົ້າ, ດັ່ງນັ້ນ, ປັສຄາຈຶ່ງຖືກຈົດຈຳຄວາມລອດຂອງພຣະເຈົ້າແລະການໄຖ່ປະຊາ

ຊົນຂອງພຣະອົງ, ຊາວຢິວຈຶ່ງໄດ້ສລອງງານນີ້ເປັນການສລອງປະຈຳປີ (ອົບພະຍົບ 12:24-27). ເມື່ອພຣະເຢຊູໄດ້ບອກພວກສາວົກຂອງພຣະອົງວ່າພຣະອົງຈະບໍ່ກິນປັສຄາອີກຈັກເທື່ອຈົນກ່ວາຈະສຳເຣັດໃນອານາຈັກຂອງພຣະເຈົ້າ (ລູກາ 22:16), ພວກເຂົາອາດຈະສົງສັຍວ່າພຣະອົງໝາຍຄວາມວ່າແນວໃດ. ບາງຄົນອາດໄດ້ສັງເກດເຫັນພຣະອົງເບິ່ງຄືບໍ່ຄ່ອຍເປັນໄປໄດ້. ພຣະເຢຊູໄດ້ສັ່ງພວກສາວົກຂອງພຣະອົງໃຫ້ຮັບເອົາເຫຼົ້າແວງປັສຄາຮ່ວມກັນແລະບອກພວກເຂົາວ່າພຣະອົງຈະບໍ່ດື່ມອີກຈົນກ່ວາອານາຈັກຂອງ ພຣະເຈົ້າມາເຖິງ (ຂໍ້ 17-18). ອາຫານປັສຄາລວມມີທັງເຂົ້າຈີ່ແລະເຫຼົ້າແວງ, ເມື່ອພຣະເຢຊູຮັບເອົາແຕ່ລະຄົນແລະອວຍພອນນັ້ນ ພຣະອົງກໍ່ເອົາເຂົ້າຈີ່ແລະເຫຼົ້າອະງຸ່ນແລະອາຫານປັສຄາດ້ວຍຄວາມໝາຍໃໝ່. ບໍ່ມີອີກແລ້ວອັນນີ້ພຽງແຕ່ຊອກຫາການໄຖ່ທີ່ຜ່ານມາຂອງພຣະເຈົ້າ, ບັດນີ້, ມັນຄາດວ່າເຫດການຊ່ອຍໃຫ້ລອດທີ່ສຸດຂອງພຣະເຈົ້າຈະເກີດຂຶ້ນ. ພຣະເຢຊູໄດ້ຢືນຢັນວ່າ, “ຈອກນີ້ແມ່ນພັນທະສັນຍາໃໝ່ດ້ວຍເລືອດຂອງເຮົາ, ເຊິ່ງໄດ້ຖອກອອກສຳລັບທ່ານ” (ຂໍ້ 20). ໂດຍການຢືນຢັນຂອງພຣະອົງ, ພຣະຜູ້ເປັນເຈົ້າໄດ້ເຊື່ອມຕໍ່ຄວາມທຸກທໍຣະມານຂອງພຣະອົງຢູ່ທີ່ເທິງໄມ້ກາງແຂນກັບຄຳເວົ້າຂອງເຢເຣມີຢາ. ພັນທະສັນຍາໃໝກຳລັງມາ, ແລະພຣະເຈົ້າໄດ້ຕັ້ງມັນຂຶ້ນໂດຍການຕາຍຂອງພຣະເຢຊູ. ເລືອດທີ່ພຣະເຢຊູໄດ້ໄຫຼລົງເທິງໄມ້ກາງແຂນໄດ້ຖືກໄຫຼລົງສຳລັບສາວົກຂອງພຣະອົງຜູ້ທີ່ຢູ່ກັບພຣະອົງໃນຄືນນັ້ນ, <u>ແຕ່ພັນທະສັນຍາໃໝ່ຢືນຢັນວ່າການເສັຽສຣະຂອງພຣະເຢຊູແມ່ນເພື່ອຄວາມລອດຂອງໂລກ</u>. ເມື່ອພວກເຮົາວາງໃຈໃນວຽກງານທີ່ສຳເຣັດສົມບູນຂອງພຣະຄຣິດ. ພວກເຮົາກໍ່ກ້າວເຂົ້າໄປໃນພັນທະສັນຍາໃໝ່ກັບພຣະອົງ. ອັຄສາວົກໂປໂລໄດ້ບອກຄຣິສຕະຈັກເມືອງໂກຣິນໂທວ່າເມື່ອພວກເຂົາຮັບປະທານເຂົ້າຈີ່ແລະນ້ຳອະງຸ່ນ, ພວກເຮົາໄດ້ປະກາດຄວາມຕາຍຂອງພຣະຜູ້ເປັນເຈົ້າຈົນກ່ວາພຣະອົງຈະສະເດັດກັບມາອີກ (1ໂກຣິນໂທ 11:26). ເມື່ອພວກເຮົາສັງເກດເບິ່ງການຮັບບັບຕິສະມາແລະການຮັບສິນມະຫາສນິດຂອງພຣະຜູ້ເປັນເຈົ້າ, ພວກເຮົາກໍ່ສເລີມສລອງການມີສ່ວນຮ່ວມໃນພັນທະສັນຍາໃໝ່. ໃນຂນະດຽວກັນນັ້ນພວກເຮົາຈະບໍ່ປະສົບກັບຄວາມສຳເຣັດສົມບູນຂອງພັນທະສັນຍາໃໝ່ຈົນກ່ວາພຣະເຢຊູຈະສເດັດກັບມາ. ພັນທະສັນຍາໃໝ່ແມ່ນການບັນລຸພັນທະສັນຍາທີ່ມີໃຫ້ກັບ ອາດາມ, ອັບຣາຮາມ, ໂມເຊ, ແລະດາວິດ.

- ທັງໝົດປະກອບດ້ວຍຂໍ້ຕົກລົງອັນສັກສິດລະຫ່ວາງພຣະເຈົ້າກັບປະຊາຊົນຂອງພຣະອົງ.
- ທັງໝົດເນັ້ນໜັກເຖິງພຣະພອນຂອງພຣະເຈົ້າແລະໜ້າທີ່ຮັບຜິດຊອບຂອງມະນຸດທີ່ມາພ້ອມກັບແຕ່ລະພັນທະສັນຍາ.
- ທັງໝົດຊີ້ໃຫ້ເຫັນເຖິງອານາຈັກໃນອານາຄົດທີ່ພຣະເຈົ້າຈະຕັ້ງພັນທະສັນຍາໃໝ່ອັນເປັນຊີວິດຕລອດໄປເປັນນິດໃນພຣະຄຣິດ.

## ນຳໃຊ້ໃນຊີວິດ

ພຣະເຈົ້າໄດ້ສັນຍາໃໝ່ວ່າມີຊີວິດນິລັນດອນຢູໃນພຣະຄຣິດ. ຈົ່ງເລືອກເອົານຶ່ງຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ກຳຈັດສິ່ງທີ່ເກົ່າແກ່ທີ່ກຳລັງກິນພື້ນທີ່ໃນຊີວິດຂອງທ່ານ.** ບາງທີມັນອາດຈະເປັນວັດຖຸເກົ່າແກ່ທີ່ທ່ານບໍ່ຕ້ອງການອີກຕໍ່ໄປຫຼືທັສນະຄະຕິເກົ່າໆທີ່ຮັກສາທ່ານຈາກສິ່ງທີ່ດີທີ່ສຸດຂອງພຣະເຈົ້າ.
- **ຖ້າທ່ານມີຄວາມສາມາດທາງດ້ານການເງິນ, ຊື້ສິ່ງໃໝ່ໆໃຫ້ກັບຄົນອື່ນ.** ບາງທີມັນເປັນອຸປກອນການຮຽນໃໝ່ສຳລັບໂຮງຮຽນປະຖົມທ້ອງຖິ່ນ, ເຄື່ອງນຸ່ງໃໝ່ສຳລັບເດັກນ້ອຍໃນການດູແລອຸປຖຳ, ຫຼືປື້ມໃໝ່ໃຫ້ເຫຼົ່ານີ້ເປັນຕົ້ນ.
- **ແບ່ງປັນອາຫານກັບຄົນໃດຄົນນຶ່ງຜູ້ທີ່ປົກກະຕິແລ້ວທ່ານບໍ່ເຄີຍຮັບປະທານອາຫານຮ່ວມກັບເຂົາ.** ໃນຖານະທີ່ພຣະເຈົ້າເປັນຜູ້ນຳພາ, ໃຫ້ເວົ້າເຖິງປະສົບການຂອງທ່ານໃນການດຳເນີນຊີວິດໃນສາຍສັມພັນກັບພຣະຄຣິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**